# ກ່ຽວກັບພວກເຮົາ

ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ ຫຼື Action with Lao Children (ALC) ແມ່ນອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ສ້າງຕັ້ງຂຶ້ນ ເພື່ອສົ່ງເສີມການສຶກສາແກ່ເດັກນ້ອຍລາວ ເພື່ອໃຫ້ເດັກນ້ອຍລາວສາມາດເລືອກອະນາຄົດຂອງເຂົາເຈົ້າໄດ້.

## ພາລະກິດຂອງພວກເຮົາ

ເມື່ອ ALC ເລີ່ມດຳເນີນກິດຈະກຳໃນປີ 1982 ຢູ່ວຽງຈັນມີພຽງຫໍສະໝຸດແຫ່ງຊາດ ກັບຮ້ານຂາຍປຶ້ມຂອງລັດບ່ອນດຽວ ເດັກນ້ອຍລາວໄດ້ສຳຜັດປຶ້ມອ່ານໜ້ອຍຫຼາຍ ແມ່ນແຕ່ໃນທຸກມື້ນີ້ ການອ່ານແລະຂຽນກໍຍັງບໍ່ແມ່ນເລື່ອງປະຈຳວັນຂອງເດັກນ້ອຍລາວ ໂດຍສະເພາະໃນຊົນນະບົດ.

ຕະຫຼອດໄລຍະເວລາກວ່າສາມສິບປີ ALC ໄດ້ຈັດພິມປຶ້ມອ່ານເປັນພາສາລາວ ເພື່ອເຮັດໃຫ້ສະພາບການອ່ານຂອງເດັກແລະໄວໜຸ່ມລາວມີທ່າກ້າວຂຶ້ນ ຄວາມປາດຖະໜາຂອງພວກເຮົາແມ່ນການເປີດໂລກະທັດໃຫ້ແກ່ເດັກນ້ອຍ ເຮັດໃຫ້ເຂົາເຈົ້າກ້າສະແດງອອກ ສາມາດເລືອກເສັ້ນທາງເດີນອັນຖືກຕ້ອງ ດ້ວຍໂຕເອງ ເພື່ອເປັນຜູ້ສ້າງໂລກອັນສະຫງົບສຸກໃນອະນາຄົດ.



# ວຽກງານຂອງພວກເຮົາ

ນັບແຕ່ປີ 1982 ເປັນຕົ້ນມາ, ALC ໄດ້ດຳເນີນຫຼາຍກິດຈະກຳ ເພື່ອສະໜັບສະໜູນດ້ານການສຶກສາສຳລັບເດັກນ້ອຍ ໃນປະເທດລາວ.

## ການຈັດພິມປຶ້ມສຳລັບເດັກ

*– ການສະໜອງປຶ້ມທີ່ຫຼາກຫຼາຍ*

ALC ຈັດພິມປຶ້ມທີ່ຂຽນໂດຍຄົນລາວເປັນພາສາລາວໃນຫຼາຍຮູບແບບ ທັງປຶ້ມເລື່ອງປະກອບຮູບ, ນິທານພື້ນເມືອງ, ວັດຈະນານຸກົມປະກອບຮູບ ແລະ ລະຄອນເຈ້ຍ (Kamishibai) ປຶ້ມສ່ວນໃຫຍ່ທີ່ຈັດພິມ ແມ່ນປຶ້ມສຳລັບເດັກ. ຮອດປັດຈຸບັນນີ້ ALC ໄດ້ຈັດພິມປຶ້ມແລ້ວ 239 ເລື່ອງ, ຈຳນວນກວ່າ 950,000 ຫົວ (1990 ຫາ 2023).

## ສ້າງໂອກາດໃນການອ່ານ

*– ສະໜັບສະໜູນຫ້ອງສະໝຸດໂຮງຮຽນ*

ALC ໄດ້ແຈກຢາຍຕູ້ປຶ້ມ-ຖົງປຶ້ມ ຫຼາຍກວ່າ 3,000 ຊຸດ ໃຫ້ໂຮງຮຽນປະຖົມ ແລະ ມັດທະຍົມ ທົ່ວປະເທດລາວ. ພວກເຮົາໄດ້ເຮັດວຽກຮ່ວມກັບຫໍສະໝຸດແຫ່ງຊາດລາວ ພາຍໃຕ້ "ໂຄງການສົ່ງເສີມການອ່ານແຫ່ງຊາດ". ALC ຍັງໄດ້ສະໜັບສະໜູນການຈັດຕັ້ງຫ້ອງສະໝຸດໃນໂຮງຮຽນ ເພື່ອສົ່ງເສີມການອ່ານໃນຊຸມຊົນ, ກິດຈະກຳດັ່ງກ່າວຮວມມີການສະໜອງປຶ້ມອ່ານ, ອຸປະກອນ ແລະ ການເຝິກອົບຮົມຄູ.

ແຕ່ປີ 1995-2023 ALC ໄດ້ຈັດຕັ້ງຫ້ອງສະໝຸດໃນໂຮງຮຽນພາຍໃຕ້ຊື່ "ຮັກອ່ານ" ໄດ້ແລ້ວ 356 ຫ້ອງ.

ການຊ່ວຍເຫຼືອນີ້ ເຮັດໃຫ້ເດັກໄດ້ໃກ້ຊິດກັບປຶ້ມອ່ານເປັນການປູກຝັງນິໄສຮັກການອ່ານ ແລະ ຍົກລະດັບການຮຽນຂອງເດັກ ຜ່ານການນຳໃຊ້ປຶ້ມອ່ານ.



## ຍົກລະດັບຄວາມສາມາດ

*– ການເຮັດວຽກຮ່ວມກັບຊຸມຊົນ*

ເພື່ອຮັບປະກັນວ່າ ທັກສະແລະບົດຮຽນຕ່າງໆ ຈະໄດ້ຮັບການຖ່າຍທອດໄປທົ່ວປະເທດ ALC ໄດ້ເຮັດວຽກຮ່ວມກັບຫ້ອງການສຶກສາທິການ ແລະ ກິລາເມືອງ, ໂຮງຮຽນ ແລະ ຄະນະພັດທະນາການສຶກສາຂັ້ນບ້ານ ເພື່ອສ້າງຄວາມອາດສາມາດໃນການຄຸ້ມຄອງວຽກງານການສຶກສາ ແລະ ຫ້ອງສະໝຸດຢ່າງຍືນຍົງ ໂດຍຊຸມຊົນ.

## ສ້າງພື້ນທີ່ສຳລັບກິດຈະກຳສ້າງສັນ

*– ສະໜັບສະໜູນ ສ.ວ.ດ ແລະ ສ.ພ.ດ*

ສູນວັດທະນະທຳເດັກ (ສ.ວ.ດ) ແລະ ສູນພັດທະນາການສຶກສາສຳລັບເດັກ (ສ.ພ.ດ) ແມ່ນສະຖານທີ່ສຳລັບເດັກໄດ້ມາເຮັດກິດຈະກຳຕ່າງໆເຊັ່ນ ອ່ານໜັງສື, ຮຽນຟ້ອນພື້ນເມືອງ, ດົນຕີ, ສິລະປະ, ເຊິ່ງບໍ່ໄດ້ສອນຢູ່ໂຮງຮຽນທົ່ວໄປ.

ນັບແຕ່ປີ 1994, ALC ໄດ້ໃຫ້ການສະໜັບສະໜູນສູນ ສ.ວ.ດ ແລະ ສ.ພ.ດ 11 ແຫ່ງໃນທົ່ວປະເທດລາວ.

# ເຊີນຊ່ອຍພວກເຮົາ

## ເຊີນສະໜັບສະໜູນພວກເຮົາ

ALC ຍາມໃດກໍຕ້ອນຮັບຜູ້ອຸປະຖຳ ບໍ່ວ່າຈະເປັນຄູ່ຮ່ວມພັດທະນາ, ອົງກອນທຸລະກິດທັງພາຍໃນ ແລະ ຕ່າງປະເທດ, ດ້ວຍການສະໜັບສະໜູນຂອງບັນດາທ່ານພວກເຮົາຈຶ່ງສາມາດຈັດຕັ້ງຫ້ອງສະໝຸດໂຮງຮຽນຫຼັງໃໝ່, ຈັດງານບຸນປຶ້ມ ໃນລະດັບປະເທດ ແລະ ສາກົນ.

## ຮ່ວມມື ແລະ ເປັນຫຸ້ນສ່ວນນຳພວກເຮົາ

ALC ສາມາດສະໜອງປຶ້ມອ່ານທີ່ມີຄຸນນະພາບ ແລະການເຝິກອົບຮົມ ສຳລັບໂຄງການດ້ານການສຶກສາຂອງບັນດາອົງການທີ່ບໍ່ຂຶ້ນກັບລັດຖະບານ ແລະອົງການຈັດຕັ້ງລັດ. ສຳລັບໂຮງຮຽນ ພວກເຮົາມີປຶ້ມສຳລັບເດັກແລະພໍ່ແມ່ ໃຫ້ທ່ານເລືອກຊື້ເພື່ອປະກອບເຂົ້າໃສ່ຫ້ອງສະໝຸດ ແລະ ຍັງສາມາດຈັດການເຝິກອົບຮົມວຽກງານຫ້ອງສະໝຸດ, ກິດຈະກຳກ່ຽວກັບປຶ້ມອ່ານ ແລະ ການເລົ່າລະຄອນເຈ້ຍ.

## ເຮັດວຽກຊ່ອຍພວກເຮົາ

ສຳລັບຜູ້ມີຄວາມສາມາດດ້ານຕ່າງໆ ເຊັ່ນ: ການຜະລິດປຶ້ມປະກອບຮູບ, ລະຄອນເຈ້ຍ, ແຕ້ມຮູບ, ດົນຕີ, ການຟ້ອນ, ການສຶກສາ ແລະ ອື່ນໆ ທ່ານສາມາດມາໂອ້ລົມນຳພວກເຮົາ. ພວກເຮົາຍັງຍິນດີຕ້ອນຮັບອາສາສະໝັກດ້ານອື່ນໆນຳອີກ.

## ເຊີນບໍລິຈາກ

ເມື່ອທ່ານບໍລິຈາກ ທ່ານໄດ້ມອບປຶ້ມອ່ານໃຫ້ກັບເດັກນ້ອຍລາວທົ່ວປະເທດ. ທ່ານຍັງສາມາດຊ່ອຍສ້າງຫ້ອງສະໝຸດໃຫ້ກັບໂຮງຮຽນ ຫຼືຊ່ອຍພິມປຶ້ມຕື່ມອີກຈັກເລື່ອງ. ຖ້າທ່ານຈະບໍລິຈາກ ກະລຸນາຕິດຕໍ່ຫາພວກເຮົາທັນທີ.



ສຳລັບຂໍ້ມູນເພີ່ມເຕີມ ເບິ່ງໄດ້ຢູ່ທີ່
**https://www.deknoylao.net/English/part_2_1e.htm**


## ເຊີນຕິດຕໍ່

**ນະຄອນຫຼວງວຽງຈັນ**
ບ້ານສະພັງໝໍ້, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ,
ສປປ ລາວ P.O.Box: 1518
Tel: +856 30 9012107 Email: alclao@laotel.com
FB: https://www.facebook.com/Deknoylaoalc

**ໂຕກຽວ ຍີ່ປຸ່ນ**
6-29-12-303 Minamimagome, Otaku, Tokyo, Japan
Tel/Fax: +81 3 3755 1603 Email: alctk@deknoylao.net
HP: https://deknoylao.net
FB: https://www.facebook.com/deknoylao


# ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ
# Action with Lao Children

ສ້າງສະພາບແວດລ້ອມທີ່ດີ ເພື່ອການອ່ານ
ແລະ ອະນາຄົດອັນສົດໃສ ແກ່ເດັກນ້ອຍ

